# ເອກະສານຊ້ອນທ້າຍ 06
# ລະບຽບໃນການແຈ້ງພາສີສໍາລັບສິນຄ້າ
# ຂ້າມແດນ ແລະ ສິນຄ້າຜ່ານແດນພາຍໃນປະເທດ

**ອີງຕາມສັນຍາ ລະຫວ່າງ ລັດຖະບານແຫ່ງລາຊະອານາຈັກ ກໍາປູເຈຍ, ສາທາລະນະລັດ ປະຊາຊົນ ຈີນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສະຫະພາບ ມຽນມາ, ລາຊະອານາຈັກ ໄທ ແລະ ສາ ທາລະນະລັດ ສັງຄົມນິຍົມ ຫວຽດນາມ ເພື່ອການອໍານວຍຄວາມສະດວກໃນການຂົນສົ່ງສິນຄ້າ ແລະ ຄົນ ຂ້າມແດນ (ຕໍ່ໄປນີ້ເອີ້ນວ່າ: "ເອກະສານຊ້ອນທ້າຍ");**

ລັດຖະບານແຫ່ງລາຊະອານາຈັກ ກໍາປູເຈຍ, ສາທາລະນະລັດ ປະຊາຊົນ ຈີນ, ສາທາລະນະລັດ ປະ ຊາທິປະ ໄຕ ປະຊາຊົນລາວ, ສະຫະພາບ ມຽນມາ, ລາຊະອານາຈັກ ໄທ ແລະ ສາທາລະນະລັດ ສັງຄົມນິ ຍົມ ຫວຽດນາມ (ຕໍ່ໄປນີ້ເອີ້ນວ່າ: "ລັດພາຄີ");

ອີງຕາມສັນຍາ ລະຫວ່າງ ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ລັດ ຖະບານແຫ່ງລາຊະອານາຈັກ ໄທ ແລະ ລັດຖະບານແຫ່ງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ເພື່ອ ການອໍານວຍຄວາມສະດວກໃນການຂົນສົ່ງສິນຄ້າ ແລະ ຄົນຂ້າມແດນ ຊຶ່ງໄດ້ລົງນາມຄັ້ງທໍາອິດໃນວັນທີ 26 ພະຈິກ 1999 ທີ່ ນະຄອນຫຼວງວຽງຈັນ ແລະ ມີການດັດແກ້ເພີ່ມເຕີມໃນວັນທີ 29 ພະຈິກ 2001 ທີ່ ນະ ຄອນຫຼວງຍາງກຸ້ງ, ເຊິ່ງລາຊະອານາຈັກ ກໍາປູເຈຍ ໄດ້ຖືກຮັບເຂົ້າເປັນພາຄີ ໃນວັນທີ 29 ພະຈິກ 2001 ທີ່ ນະຄອນຫຼວງຍາງກຸ້ງ, ສາທາລະນະລັດ ປະຊາຊົນ ຈີນ ໄດ້ຖືກຮັບເຂົ້າເປັນພາຄີ ໃນວັນທີ 03 ພະຈິກ 2002 ທີ່ ພະນົມເປນ ແລະ ສະຫະພາບ ມຽນມາ ໄດ້ຖືກຮັບເຂົ້າເປັນພາຄີ ໃນວັນທີ 19 ກັນຍາ 2003 ທີ່ ເມືອງຕາລີ ແລະ ໄດ້ມີການດັດແກ້ເພີ່ມເຕີມ ໃນວັນທີ 30 ເມສາ 2004 ທີ່ ພະນົມເປນ (ຕໍ່ໄປນີ້ເອີ້ນວ່າ: "ສັນຍາ");

ອີງຕາມມາດຕາ 03 (ຂ) ແລະ (ບ) ຂອງສັນຍາ ຊຶ່ງມີຜົນຕໍ່ເອກະສານຊ້ອນທ້າຍ ແລະ ອະນຸສັນ ຍາ ຕ້ອງກໍານົດລາຍລະອຽດທາງດ້ານເຕັກນິກ ຫຼື ເວລາ ແລະ/ຫຼື ສະຖານທີສະເພາະ ແລະ ໃຫ້ເອກະສານຊ້ອນທ້າຍ ແລະ ອະນຸສັນຍາຖືເປັນສ່ວນໜຶ່ງຂອງສັນຍາ ແລະ ມີຜົນບັງຄັບໃຊ້ເທົ່າທຽມກັນ;

ອີງຕາມມາດຕາ 36 ຂອງສັນຍາທີ່ມີການດັດແກ້, ການລົງນາມ ແລະ ການໃຫ້ສັດຕະຍາບັນ ຫຼື ການຮັບຮອງ ແລະ ການມີຜົນບັງຄັບໃຊ້ຂອງສັນຍາ ອາດຈໍາແນກອອກຈາກເອກະສານຊ້ອນທ້າຍ ແລະ ອະ ນຸສັນຍາ;

ອີງຕາມກອງປະຊຸມລັດຖະມົນຕີເສດຖະກິດໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ 6 ປະເທດ ຄັ້ງທີ 9 ທີ່ມະນີລາ ໃນເດືອນ ມັງກອນ 2000, ກອງປະຊຸມການຂົນສົ່ງພາຍໃຕ້ການຮ່ວມມືໃນອະນຸພາກພື້ນລຸ່ມແມ່ນໍ້າຂອງ ຄັ້ງ 7 ທີ່ ໂຮ

ຈີມິນ ໃນເດືອນ ສິງຫາ 2002 ແລະ ກອງປະຊຸມລັດຖະມົນຕີເສດຖະກິດໃນອະນຸພາກພື້ນ ລຸ່ມແມ່ນ້ຳຂອງ 6 ປະເທດ ຄັ້ງທີ 11 ທີ່ ພະນົມເປນ ໃນເດືອນ ກັນຍາ 2002 ຊຶ່ງລັດຖະບານຂອງລັດພາຄີ ໄດ້ຕົກລົງເຫັນດີຕໍ່ແຜນງານການສ້າງສັນຍາ ແລະ ເອກະສານຊ້ອນທ້າຍ ແລະ ອະນຸສັນຍາຄັດຕິດສັນຍາສະບັບນີ້ໃຫ້ສຳເລັດໃນປີ 2005;

ອີງຕາມຍັດຕິ ສະບັບເລກທີ 48/11 ຂອງຄະນະກາມາທິການເພື່ອເສດຖະກິດ ແລະ ສັງຄົມ ຂອງອົງ ການສະຫະປະຊາຊາດ ກ່ຽວກັບການຂົນສົ່ງທາງບົກ ແລະ ລົດໄຟ ໃນສ່ວນທີ່ກ່ຽວກັບມາດຕະການອຳນວຍ ຄວາມສະດວກທີ່ຮຽກຮ້ອງໃຫ້ມີການຮັບຮອງການອະນຸຍາດດ້ານພາສີ ວ່າດ້ວຍການຂົນສົ່ງສິນຄ້າ ລະຫວ່າງປະເທດພາຍໃຕ້ການອະນຸຍາດ TIR (ທີ່ ເຈນີວາ ປີ 1975); ແລະ

ອີງຕາມມາດຕາ 07 ຂອງສັນຍາສະບັບນີ້ ຊຶ່ງການົດໃຫ້ມີເອກະສານຊ້ອນທ້າຍນີ້ ເພື່ອການົດລາຍ ລະອຽດທາງດ້ານເຕັກນິກ.

## ໄດ້ມີການຕົກລົງ ດັ່ງຕໍ່ໄປນີ້:

## ມາດຕາ 01: ບົດບັນຍັດທົ່ວໄປ.

ກ. ການອະທິບາຍຄຳສັບ.

1. ການຂ້າມແດນລະຫວ່າງປະເທດ ໝາຍເຖິງ: ສ່ວນໜຶ່ງຂອງການດຳເນີນການຂົນສົ່ງລະຫວ່າງ ຈຸດຂ້າມແດນລະຫວ່າງປະເທດ 2 ປະເທດ ຊຶ່ງສິນຄ້າໄດ້ຜ່ານເຂົ້າ ແລະ ຜ່ານອອກນອກອານາເຂດຂອງລັດພາຄີຕາມລຳດັບ.

2. ການຜ່ານແດນພາຍໃນປະເທດ ໝາຍເຖິງ: ກ). ສ່ວນໜຶ່ງຂອງການດຳເນີນການຂົນສົ່ງລະຫວ່າງ ຈຸດກວດກາພາຍໃນປະເທດກັບຈຸດຜ່ານແດນລະຫວ່າງປະເທດ ຊຶ່ງສິນຄ້າໄດ້ຜ່ານແດນອອກນອກອານາເຂດ ຂອງລັດພາຄີ ຫຼື ຂ). ສ່ວນໜຶ່ງຂອງການດຳເນີນການຂົນສົ່ງລະຫວ່າງຈຸດຜ່ານແດນລະຫວ່າງປະເທດ ຊຶ່ງສິນ ຄ້າໄດ້ຜ່ານເຂົ້າມາອານາເຂດຂອງລັດພາຄີກັບຈຸດກວດກາພາຍໃນປະເທດ.

3. ເຫດສຸດວິໄສ ໝາຍເຖິງ: ສະຖານະການທີ່ບໍ່ສາມາດຄາດການລ່ວງໜ້າ ແລະ ຫຼີກລ້ຽງ ແລະ ບໍ່ ສາມາດປ້ອງກັນ ຫຼື ຄວບຄຸມເຫດການທີ່ເກີດຂຶ້ນຕໍ່ເນື່ອງໄດ້.

4. ໜ່ວຍສິດທິພິເສດໃນການຖອນເງິນ (Special Drawing Rigth-SDR) ໝາຍເຖິງ: ໜ່ວຍສິດທິພິເສດໃນການຖອນເງິນ ຊຶ່ງກຳນົດໂດຍກອງທຶນການເງິນລະຫວ່າງປະເທດ (IMF). ການແລກປ່ຽນເງິນເປັນສະກຸນເງິນຂອງປະເທດ ຈະຕ້ອງຄິດໄລ່ໃຫ້ສອດຄ່ອງກັບວິທີການຄິດໄລ່ຄ່າເງິນທີ່ກຳນົດ ໂດຍກອງທຶນການເງິນລະຫວ່າງປະເທດ.

ຂ. ຂອບເຂດການນຳໃຊ້.

5. ໃຫ້ນຳໃຊ້ລະບຽບການຕາມເອກະສານຊ້ອນທ້າຍນີ້ໄປໃຊ້ກັບການຂ້າມແດນລະຫວ່າງປະເທດ ແລະ ການຜ່ານແດນພາຍໃນປະເທດສຳລັບການດຳເນີນການຂົນສົ່ງລະຫວ່າງປະເທດເທົ່ານັ້ນ (ເຊັ່ນ: ການຜ່ານແດນ) ແລະ ເປັນການດຳເນີນການລະຫວ່າງເສັ້ນທາງ ແລະ ຈຸດຜ່ານເຂົ້າ ແລະ ຈຸດຜ່ານອອກ ທີ່ກຳນົດໄວ້ອະນຸສັນຍາ 01 ຂອງສັນຍາ.

6. ໃຫ້ນຳໃຊ້ລະບຽບການຕາມເອກະສານຊ້ອນທ້າຍນີ້ໄປໃຊ້ກັບການດຳເນີນການຂົນສົ່ງລະຫວ່າງປະເທດເພື່ອຄ່າຕອບແທນເທົ່ານັ້ນ.

7. ບໍ່ໃຫ້ນຳເອົາລະບຽບການຕາມເອກະສານຊ້ອນທ້າຍນີ້ໄປໃຊ້ກັບການບັນທຸກສິນຄ້າທີ່ຢູ່ພາຍໃຕ້ກາປະທັບດຽວກັນຕາມທີ່ກ່າວໄວ້ໃນມາດຕາ 03 (ຂ) (1) ຂອງເອກະສານຊ້ອນທ້າຍນີ້ ແລະ ພາຍໃຕ້ເອກະ ສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນພາຍໃນປະເທດສະບັບດຽວກັນຕາມທີ່ກ່າວໃນມາດຕາ 04 ຂອງເອກະສານຊ້ອນທ້ານນີ້. ຫາກສິນຄ້າທີ່ບັນທຸກມາດັ່ງກ່າວມີປະເທດກຳເນີດ/ ປະເທດປ້າຍທາງຫຼາຍແຫ່ງ ຊຶ່ງຈຳເປັນຕ້ອງຂົນຖ່າຍສິນຄ້າບາງສ່ວນຕາມເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນໃນປະເທດລະຫວ່າງທາງ.

8. ລະບຽບການ ແລະ ວິທີການທີ່ໄດ້ກຳນົດໃນເອກະສານຊ້ອນທ້າຍນີ້ເປັນທາງເລືອກຂອງຜູ້ດຳເນີນການຂົນສົ່ງທີ່ມີສິດຈະປະຕິບັດຕາມພາສີສຳລັບສິນຄ້າຂ້າມແດນຕາມລະບຽບການຂອງເອກະສານຊ້ອນທ້າຍນີ້ ຫຼື ຈະປະຕິບັດຕາມລະບຽບ ແລະ ວິທີການແຈ້ງພາສີສຳລັບສິນຄ້າຜ່ານແດນອື່ນຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນ (ຖ້າມີ).

9. ເອກະສານຊ້ອນທ້າຍນີ້ບໍ່ເປັນຂໍ້ຫ້າມໃນການນຳໃຊ້ກົດໝາຍ ແລະ ລະບຽບການຂອງປະເທດສຳ ລັບສິນຄ້າເກືອດຫ້າມ ແລະ ສິນຄ້າເກືອດຫ້າມສຳລັບການຂົນສົ່ງຂ້າມແດນ ແລະ ໃຫ້ລັດພາຄີເຜີຍແຜ່ລາຍ ການສິນຄ້າເກືອດຫ້າມຕ້ອງກຳກັບໃນການຂົນສົ່ງຂ້າມແດນນຳອີກ.

10. ເອກະສານຊ້ອນທ້າຍນີ້ບໍ່ເປັນຂໍ້ຫ້າມໃນການນຳໃຊ້ກົດໝາຍ ແລະ ລະບຽບການຂອງປະເທດສຳລັບດ້ານສຸຂານາໄມ/ກັກກັນໂລກຕິດຕໍ່ທີ່ສອດຄ່ອງກັບມາດຕາ 09 ຂອງສັນຍາ ໃນສ່ວນທີ່ກ່ຽວກັບສິນຄ້າ.

11. ເມື່ອໃດທີ່ສາມາດປະຕິບັດໄດ້, ໃຫ້ນຳວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນຕາມເອກະ ສານຊ້ອນທ້າຍນີ້ມາໃຊ້ແທນວິທີການແຈ້ງພາສີຂອງປະເທດສຳລັບສິນຄ້າຂ້າມແດນ (ທັງລະຫວ່າງປະເທດ ແລະ ຜ່ານພາຍໃນປະເທດ).

12. ໃນວິທີການແຈ້ງພາສີທາງອີເລັກໂຕນິກມີຜົນບັງຄັບໃຊ້ຕາມມາດຕາ 04 (ງ) ຂອງສັນຍາ, ມາດ ຕາ 08 ຂອງເອກະສານຊ້ອນທ້າຍ 04 ແລະ ມາດຕາ 07 ຂອງເອກະສານຊ້ອນທ້າຍ 12 ຂອງສັນຍານີ້ ໃຫ້ລັດພາຄີໃຊ້ມາດຕະການທີ່ເໝາະສົມເພື່ອອຳນວຍຄວາມສະດວກແກ່ຜູ້ດຳເນີນການຂົນສົ່ງໃຫ້ສາມາດປະຕິ ບັດວິທີການທາງອີເລັກໂຕນິກຂອງຕົນໄດ້.

## ມາດຕາ 02: ຂັ້ນຕອນການແຈ້ງເຈົ້າໜ້າທີ່ພາສີຕໍ່ການຂ້າມແດນ.

ກ. ການຍົກເວັ້ນການກວດກາສິນຄ້າ, ການວາງເງິນຄໍ້າປະກັນ ແລະ ການຕິດຕາມ.

ໃຫ້ຖືເປັນຫຼັກການທົ່ວໄປທີ່ໃຫ້ສິນຄ້າທີ່ຂົນສົ່ງຂ້າມແດນພາຍໃຕ້ຫຼັກການຕາມເອກະສານຊ້ອນທ້າຍນີ້ ໄດ້ຮັບການຍົກເວັ້ນຈາກການກວດກາສິນຄ້າໃນລະຫວ່າງທາງທີ່ເຈົ້າໜ້າທີ່ພາສີປະຕິບັດໜ້າທີ່ຕາມປົກກະ ຕິ, ການຕິດຕາມພາຍໃນປະເທດ ແລະ ການວາງເງິນຄໍ້າປະກັນເພື່ອຄໍ້າປະກັນດ້ານພາສີ ທັງນີ້ໃຫ້ເປັນໄປຕາມທີ່ໄດ້ກຳນົດໄວ້ດັ່ງລຸ່ມນີ້.

ຂ. ການກວດກາເອກະສານ ແລະ ການກວດກາພາຍນອກ.

ໃຫ້ນຳຍານພາຫະນະຂົນສົ່ງພ້ອມດ້ວຍສິນຄ້າ ແລະ ເອກະສານຜ່ານວິທີການແຈ້ງພາສີສຳລັບສິນ ຄ້າຂ້າມແດນ ແລະ ສິນຄ້າຜ່ານແດນພາຍໃນປະເທດ ມາສະແດງຕໍ່ໜ່ວຍງານພາສີໃນລະຫວ່າງທາງ ເພື່ອການກວດກາເອກະສານ ແລະ ກວດກາສະພາບພາຍນອກ ແລະ ການຄວບຄຸມຫ້ອງບັນທຸກສິນຄ້າເທົ່ານັ້ນ.

ຄ. ການກວດການສິນຄ້າຂອງເຈົ້າໜ້າທີ່ພາສີເປັນກໍລະນີພິເສດ.

ເຖິງຢ່າງໃດກໍ່ຕາມ, ສຳລັບກໍລະນີພິເສດ ແລະ ກໍລະນີສະເພາະທີ່ສົງໄສໃນຄວາມຜິດປົກກະຕິ ໜ່ວຍງານພາສີອາດດຳເນີນການກວດກາສິນຄ້າລະຫວ່າງທາງໄດ້.

ງ. ການຕິດຕາມພາຫະນະ/ສິນຄ້າ.

ໜ່ວຍງານພາສີອາດໃຊ້ມາດຕະການທີ່ເໝາະສົມ (ເຊັ່ນ: ວິທີທາງອີເລັກໂຕນິກ, ລະບົບຕິດຕາມຕຳແໜ່ງ, ເຕັກໂນໂລຊີດ້ານຂໍ້ມູນ ແລະ ການສື່ສານ) ເພື່ອຕິດຕາມການເຄື່ອນຍ້າຍສິນຄ້າໂດຍປາດສະຈາກການແຊກແຊ່ງ, ຖ່ວງດຶງໃຫ້ຊັກຊ້າ ຫຼື ການຮຽກຮ້ອງໃດໆເພີ່ມເຕີມຈາກຜູ້ດຳເນີນການຂົນສົ່ງ.

## ມາດຕາ 03: ຍານພາຫະນະທີ່ໃຊ້ໃນການຂົນສົ່ງ.

ກ. ມາດຕະຖານທາງເຕັກນິກ ແລະ ການຮັບຮອງ.

1. ພາຫະນະ ແລະ ຕູ້ບັນທຸກສິນຄ້າ (Container) ທີ່ໃຊ້ໃນການຂົນສົ່ງພາຍໃຕ້ລະບຽບການຂອງເອກະສານຊ້ອນທ້າຍນີ້ຈະຕ້ອງຖືກສ້າງ ແລະ ຕິດຕັ້ງອຸປະກອນໃຫ້ມີລັກສະນະ ດັ່ງນີ້:

- ບໍ່ສາມາດລັກລອບສິນຄ້າໃດໆດ້ວຍການແທນທີ່ຢ່າງມີເງື່ອນງໍາ, ການເອົາສິນຄ້າອອກ ຫຼື ນໍາສິນຄ້າເຂົ້າໄປໃນຫ້ອງບັນທຸກ ໂດຍບໍ່ຖິ່ມຮ່ອງຮອຍທີ່ສະແດງໃຫ້ເຫັນເຖິງການກະທໍາ ຫຼື ການທໍາລາຍກາປະທັບພາສີຢ່າງເຫັນໄດ້ແຈ້ງ;
- ສາມາດຕິດກາປະທັບພາສີ ລວມເຖິງອຸປະກອນໄດ້ງ່າຍ ແລະ ມີປະສິດທິພາບ;

- ປາດສະຈາກສ່ວນປົກປິດໃດໆທີ່ສາມາດເຊື່ອງສິນຄ້າໄດ້; ແລະ
- ເຈົ້າໜ້າທີ່ພາສີສາມາດເຂົ້າໄປກວດພື້ນທີ່ທັງໝົດທີ່ໃຊ້ບັນຈຸສິນຄ້າໄດ້ໂດຍງ່າຍ.

2. ພາຍໃຕ້ລະບຽບການຂອງເອກະສານຊ້ອນທ້າຍນີ້, ໜ່ວຍງານພາສີຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນ ອາດປະຕິເສດການໃຫ້ເຄື່ອນຍ້າຍພາຫະນະ ຫາກບໍ່ສາມາດສະແດງໃຫ້ເຫັນວ່າການອອກແບບ ແລະ ການສ້າງ ພາຫະນະນັ້ນສະແດງເຖິງຄວາມປອດໄພຈາກການລັກລອບສິນຄ້າໄດ້ຢ່າງພຽງພໍ.

3. ພາຍໃຕ້ລະບຽບການຂອງເອກະສານຊ້ອນທ້າຍນີ້, ໜ່ວຍງານພາສີຂອງປະເທດທີ່ມີການຂົນສົ່ງ ເກີດຂຶ້ນ ຈະຕ້ອງບໍ່ປະຕິເສດຍານພາຫະນະທີ່ຜ່ານການຮັບຮອງສຳລັບການຂົນສົ່ງແລ້ວ ບໍ່ວ່າຈະເປັນສະ ເພາະຄັນ ຫຼື ແບບທີ່ອອກ (ລຸ້ນຂອງຍານພາຫະນະ) ຕາມມາດຕະຖານທາງເຕັກນິກສຳລັບຍານພາຫະນະທີ່ ກຳນົດໄວ້ໃນເອກະສານຄັດຕິດ 01 ກ ຂອງເອກະສານຊ້ອນທ້າຍນີ້ ແລະ ໄດ້ຮັບໜັງສືຮັບຮອງທີ່ອອກໃຫ້ ໂດຍໜ່ວຍງານກວດກາສະພາບຍານພາຫະນະຂອງປະເທດຜູ້ສົ່ງຕາມທີ່ກຳນົດໄວ້ໃນເອກະສານຄັດຕິດ 01 ຂ ຂອງເອກະສານຊ້ອນທ້າຍນີ້.

4. ພາຍໃຕ້ລະບຽບການຂອງເອກະສານຊ້ອນທ້າຍນີ້, ໜ່ວຍງານພາສີຂອງປະເທດທີ່ມີການຂົນສົ່ງ ເກີດຂຶ້ນ ຈະຕ້ອງບໍ່ປະຕິເສດຕູ້ບັນທຸກສິນຄ້າທີ່ຜ່ານການຮັບຮອງສຳລັບການຂົນສົ່ງແລ້ວ ບໍ່ວ່າຈະເປັນສະ ເພາະຕູ້ບັນທຸກນັ້ນ ຫຼື ປະເພດຂອງແບບ (ລຸ້ນຂອງຕູ້ບັນທຸກ/Container) ຕາມທີ່ກຳນົດໄວ້ໃນເອກະສານ ຄັດຕິດ 02 ກ ຂອງເອກະສານຊ້ອນທ້າຍນີ້ ແລະ ໄດ້ຮັບໜັງສືຮັບຮອງທີ່ອອກໃຫ້ໂດຍໜ່ວຍງານກວດກາສະ ພາບຕູ້ບັນທຸກສິນຄ້າຂອງປະເທດຜູ້ສົ່ງຕາມທີ່ກຳນົດໄວ້ໃນເອກະສານຄັດຕິດ 02 ຂ ຂອງເອກະສານຊ້ອນ ທ້າຍນີ້.

ຂ. ການໜີບກົ່ວ/ກາປະທັບ (Sealing).

1. ໃຫ້ໜ່ວຍງານພາສີຂອງປະເທດຕົ້ນທາງຂອງການດຳເນີນການຂົນສົ່ງໜີບກົ່ວ/ກາປະທັບທີ່ຕູ້ ບັນທຸກສິນຄ້າຂອງຍານພາຫະນະ ຫຼື ຕູ້ບັນທຸກສິນຄ້າ.

2. ໃຫ້ໜ່ວຍງານພາສີຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນຍອມຮັບການໜີບກົ່ວ/ກາປະທັບທີ່ຕິດ ມາໂດຍໜ່ວຍງານພາສີຂອງລັດພາຄີອື່ນທີ່ຢູ່ໃນສະພາບບໍ່ເສຍຫາຍ, ແຕ່ຫາກມີຄວາມຈຳເປັນເພື່ອຈຸດປະ ສົງດ້ານການຄວບຄຸມທີ່ມີສິດທີ່ຈະໜີບກົ່ວ/ກາປະທັບຂອງຕົນເພີ່ມເຕີມໃນຂະນະທີ່ຜ່ານເຂົ້າມາໃນເຂດ ແດນຂອງຕົນ.

3. ຫາກໜ່ວຍງານພາສີຈຳເປັນຕ້ອງທຳລາຍກາປະທັບເພື່ອດຳເນີນການກວດກາສິນຄ້າລະຫວ່າງທາງ ຫຼື ໃນກໍລະນີມີການປ່ຽນພາຫະນະຕາມທີ່ລະບຸໄວ້ໃນມາດຕາ 08 (ຂ). ໜ່ວຍງານພາສີຈະຕ້ອງໜີບ ກົ່ວ/ກາປະທັບອັນໃໝ່ ແລະ ບັນທຶກການດຳເນີນການນີ້ໄວ້ໃນເອກະສານຜ່ານວິທີການແຈ້ງພາສີສຳລັບສິນ ຄ້າຂ້າມແດນ ແລະ ສິນຄ້າຜ່ານແດນພາຍໃນປະເທດໂດຍບໍ່ຄິດຄ່າໃຊ້ຈ່າຍໃດໆ.

4. ສິນຄ້າທີ່ໜັກ ຫຼື ມີຂະໜາດໃຫຍ່ຫຼາຍອັນເນື່ອງມາຈາກນ້ຳໜັກ ຫຼື ຂະໜາດ ຫຼື ລັກສະນະຕາມທຳມະຊາດທີ່ຕາມປົກກະຕິບໍ່ຂົນສົ່ງໃນຕູ້ບັນທຸກສິນຄ້າແບບປິດ ອາດໃຫ້ຂົນສົ່ງດ້ວຍຍານພາຫະນະທີ່ບໍ່ມີການໜີບກ່ວາ/ກາປະທັບໄດ້, ຫາກສິນຄ້າເຫຼົ່ານັ້ນສາມາດລະບຸໄດ້ໂດຍງ່າຍຈາກລາຍລະອຽດທີ່ໃຫ້ມາ (ເຊັ່ນ   ບັນຊີບັນຈຸຫີບຫໍ່, ຮູບຖ່າຍ, ຮູບແຕ້ມ). ທັງນີ້ເພື່ອປ້ອງກັນການສັບປ່ຽນສິນຄ້າ, ການເອົາສິນຄ້າອອກໄປ ຫຼື ການນຳເອົາສິນຄ້າເຂົ້າມາ. ໜ່ວຍງານພາສີອາດໃຊ້ມາດຕະການຕິດຕາມທີ່ເໝາະສົມ ເພື່ອປ້ອງກັນການສັບປ່ຽນສິນຄ້າ, ການເອົາສິນຄ້າອອກໄປ ຫຼື ການນຳເອົາສິນຄ້າເພີ່ມເຂົ້າມາ.

## ມາດຕາ 04: ເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນພາຍໃນປະເທດ.

ກ. ຜູ້ດຳເນີນການຂົນສົ່ງນຳເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນ ຄ້າຜ່ານແດນພາຍໃນປະເທດຕິດໄປນຳ.

ຂ. ໃຫ້ອົງການ/ສະຖາບັນທີ່ຄ້ຳປະກັນ/ອອກເອກະສານທີ່ໄດ້ຮັບມອບອຳນາດ ເປັນຜູ້ອອກເອກະ ສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນພາຍໃນປະເທດ.

ຄ. ໂດຍເອກະສານນີ້, ອົງການ/ສະຖາບັນຄ້ຳປະກັນ/ອອກເອກະສານທີ່ໄດ້ຮັບມອບອຳນາດຈະຕ້ອງຄ້ຳປະກັນການຊຳລະເອກະສານດ້ານພາສີ-ອາກອນ ແລະ ດອກເບ້ຍຕາມທີ່ໄດ້ລະບຸໃນມາດຕາ 10 (ກ) ຂອງເອກະສານຊ້ອນທ້າຍນີ້.

ງ. ເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນພາຍໃນປະເທດຈະຕ້ອງປະກອບດ້ວຍຈຳນວນສຳເນົາຕົ້ນສະບັບ ດັ່ງຕໍ່ໄປນີ້:

1. ໜຶ່ງສະບັບສຳລັບອົງການຄ້ຳປະກັນ/ອອກເອກະສານ;
2. ໜຶ່ງສະບັບສຳລັບຜູ້ດຳເນີນການຂົນສົ່ງ;
3. ສອງສະບັບສຳລັບສຳນັກງານຂອງໜ່ວຍງານພາສີປະເທດຕົ້ນທາງ;
4. ສອງສະບັບສຳລັບໜ່ວຍງານພາສີຂອງປະເທດທີ່ໃຫ້ຂ້າມແດນ ຊຶ່ງມີການຂົນສົ່ງເກີດຂຶ້ນໃນເຂດແດນຂອງຕົນ; ແລະ
5. ສອງສະບັບສຳລັບສຳນັກງານຂອງໜ່ວຍງານພາສີປະເທດປາຍທາງ.

ຈ. ເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນພາຍໃນປະເທດ ຈະຕ້ອງຄວບຄຸມເຖິງລາຍລະອຽດ ຊຶ່ງເປັນພາສາອັງກິດໂດຍປາດສະຈາກການທຳລາຍການໃຊ້ພາສາປະຈຳຊາດຄວບຄູ່ກັນໄປ ດັ່ງຕໍ່ໄປນີ້:

1. ຊື່ເອກະສານ: ເອກະສານຜ່ານວິທີການແຈ້ງພາສີສໍາລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນພາຍໃນປະເທດ;
1. ເນື້ອໃນທີ່ກ່າວໄວ້ໃນມາດຕາ 07 ແລະ ເອກະສານຊ້ອນທ້າຍ 06 ຂອງສັນຍາ;
2. ຊື່ອົງການທີ່ອອກເອກະສານ ແລະ ບ່ອນສໍາລັບລົງລາຍເຊັນ, ຊື່ ແລະ/ຫຼື ກາປະທັບ;
3. ຊື່ ແລະ ທີ່ຢູ່ຂອງຜູ້ດໍາເນີນການຂົນສົ່ງ ແລະ ບ່ອນສໍາລັບລົງລາຍເຊັນ, ຊື່ ແລະ/ຫຼື ກາປະທັບ;
4. ລາຍລະອຽດອື່ນເພື່ອເປັນຫຼັກຖານການກວດກາ ເຊັ່ນ:

- ປະເທດຕົ້ນທາງ, ປະເທດຂ້າມແດນ ແລະ ປະເທດປາຍທາງ;
- ຈຸດຜ່ານເຂົ້າ ແລະ ຜ່ານອອກຕາມລໍາດັບ; ແລະ
- ອາຍຸຂອງເອກະສານ ແລະ ການຕໍ່ອາຍຸ.

6. ຄຸນສົມບັດສະເພາະຂອງຍານພາຫະນະທີ່ໃຊ້ດໍາເນີນການຂົນສົ່ງ;

7. ກາປະທັບ ຫຼື ເຄື່ອງໝາຍທີ່ໃຊ້ລະບຸ;

8. ບ່ອນສໍາລັບເຈົ້າໜ້າທີ່ພາສີບັນທຶກການທໍາລາຍການໜີບກົ່ວ/ການຕິດກາປະທັບ ແລະ

ການໜີບກົ່ວ/ກາປະທັບອັນໃໝ່ລະຫວ່າງທາງ;

9. ບ່ອນສໍາລັບບັນທຶກການປ່ຽນພາຫະນະລະຫວ່າງທາງ.

10. 8 ບ່ອນ: 2 ບ່ອນສໍາລັບພາຍໃນປະເທດຕົ້ນທາງ, 4 ບ່ອນສາລັບປະເທດຂ້າມແດນ

ແລະ 2 ບ່ອນສໍາລັບພາຍໃນປະເທດປາຍທາງ:

- ບ່ອນທີ 1: ປະກອບດ້ວຍສະຖານທີ່ ແລະ ວັນທີທີ່ສໍານັກງານຂອງໜ່ວຍງານພາສີປະເທດຕົ້ນທາງຕິດກາປະທັບສໍາລັບການສົ່ງອອກ;
- ບ່ອນທີ 2: ປະກອບດ້ວຍການຮັບຮອງການຂ້າມແດນຂອງປະເທດກໍາເນີດສິນ ຄ້າ;
- ບ່ອນທີ 3-6: ປະກອບດ້ວຍການຮັບຮອງການຜ່ານເຂົ້າ ແລະ ຜ່ານອອກຂອງປະເທດຜ່ານແດນຕາມລໍາດັບ;
- ບ່ອນທີ 7: ປະກອບດ້ວຍການຮັບຮອງການຜ່ານເຂົ້າຂອງປະເທດປາຍທາງ; ແລະ
- ບ່ອນທີ 8: ປະກອບດ້ວຍສະຖານທີ່ ແລະ ວັນທີທີ່ສໍານັກງານຂອງໜ່ວຍງານພາສີປະເທດປາຍທາງໄດ້ເອົາກາປະທັບອອກທີ່ປະເທດປາຍທາງ ເພື່ອປະຕິບັດວິທີການກວດປ່ອຍສໍາລັບໃຊ້ພາຍໃນປະເທດ ຫຼື ປະຕິບັດວິທີການພາສີອື່ນສໍາລັບສິນຄ້າ; ແລະ

11. ບ່ອນບັນຊີສິນຄ້າສຳລັບເຮືອ ປະກອບໄປດ້ວຍ:

- ຈຳນວນ ແລະ ຊະນິດຫີບຫໍ່;
- ລາຍລະອຽດສິນຄ້າ;
- ນ້ຳໜັກລວມຂອງສິນຄ້າ ແລະ ຫີບຫໍ່ທີ່ບັນຈຸເປັນກິໂລກຼາມ; ແລະ
- ມູນຄ່າພາສີ.

ຄະນະກຳມະການຮ່ວມອາດປ່ຽນແປງລາຍລະອຽດທີ່ມີຢູ່ໃນເອກະສານຜ່ານວິທີການແຈ້ງພາສີສຳ ລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານພາຍໃນປະເທດຕາມຄວາມເໝາະສົມ.

ສ. ໃຫ້ຄະນະກຳມະການຮ່ວມກຳນົດຮູບແບບ, ລັກສະນະ, ໂຄງສ້າງ ແລະ ຄຸນສົມບັດສະເພາະຂອງການພິມແບບຟອມເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນພາຍໃນປະເທດ.

ຊ. ເອກະສານຄວນກວມເຖິງຫ້ອງບັນທຶກສິນຄ້າທັງໝົດ ພາຍໃຕ້ການໜີບກວ່າ/ກາປະທັບຂອງພາ ສີ.

ຍ. ເອກະສານຈະຕ້ອງມີຜົນນຳໃຊ້ໄດ້ກັບການເດີນທາງພຽງຄັ້ງດຽວ ແລະ ຈະຕ້ອງລະບຸຂອບເຂດທາງພູມມິສາດ ແລະ ຈຸດຜ່ານເຂົ້າ ແລະ ຈຸດຜ່ານອອກທີ່ເປັນໄປຕາມອະນຸສັນຍາ 01 ຂອງສັນຍາ ແລະ ໄລ ຍະເວລາທີ່ມີຜົນບັງຄັບໃຊ້.

ດ. ສຳລັບສິນຄ້າໃນທາງການຄ້າຈະຕ້ອງຄັດຕິດແນບສຳເນົາບັນຊີລາຄາສິນຄ້າໄວ້ກັບແຕ່ລະສຳເນົາຂອງເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນພາຍໃນປະເທດ.

## ມາດຕາ 05: ຫຼັກຖານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນພາຍໃນປະເທດ.

ກ. ໃຫ້ສະແດງຫຼັກຖານຂອງການດຳເນີນການຂົນສົ່ງພາຍໃຕ້ລະບຽບການຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນພາຍໃນປະເທດຂອງເອກະສານຊ້ອນທ້າຍນີ້ ຖືກຕາມສຳເນົາຕົ້ນສະບັບຂອງເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນພາຍໃນປະເທດທີ່ມີຢູ່ ຊຶ່ງຜູ້ດຳເນີນການຂົນສົ່ງໄດ້ລົງລາຍເຊັນໄວ້ ແລະ ໜ່ວຍງານພາສີໄດ້ຮັບຮອງແລ້ວຕາມລຳ ດັບ.

ຂ. ໃຫ້ສະແດງຫຼັກຖານຂອງການຜ່ານເຂົ້າຂອງສິນຄ້າໄປຍັງເຂດແດນຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນ ຖືກຕາມສຳເນົາຕົ້ນສະບັບຂອງເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນໃນປະເທດທີ່ມີຢູ່ ຊຶ່ງຜູ້ດຳເນີນການຂົນສົ່ງໄດ້ລົງລາຍເຊັນໄວ້ ແລະ ໜ່ວຍງານພາສີໄດ້ຮັບ ຮອງເຖິງການຜ່ານເຂົ້າແລ້ວຕາມລຳດັບ.

ຄ. ໃຫ້ສະແດງຫຼັກຖານຂອງການຜ່ານອອກຂອງສິນຄ້າຈາກເຂດແດນຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນ ຖືກຕາມສຳເນົາຕົ້ນສະບັບຂອງເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນໃນປະເທດທີ່ມີຢູ່ ຊຶ່ງຜູ້ດຳເນີນການຂົນສົ່ງໄດ້ລົງລາຍເຊັນ ແລະ ໜ່ວຍງານພາສີໄດ້ຮັບຮອງເຖິງການຜ່ານອອກແລ້ວຕາມລຳດັບ.

ງ. ກໍລະນີທີ່ບໍ່ມີສຳເນົາຕົ້ນສະບັບຂອງເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນໃນປະເທດດັ່ງກ່າວໃນເບື້ອງຕົ້ນກ່ຽວກັບການຮັບຮອງຂອງການຜ່ານອອກ, ຜູ້ປະ ກອບການຂົນສົ່ງອາດຈະກະກຽມວິທີພິສູດອື່ນທີ່ເຮັດໃຫ້ໜ່ວຍງານພາສີເຂົ້າໃຈໄດ້ວ່າສິນຄ້າໄດ້ຖືກນຳອອກໄປແລ້ວແທ້ຈິງ.

## ມາດຕາ 06: ການລຶບລ້າງເອກະສານທີ່ຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມ ແດນ ແລະ ສິນຄ້າຜ່ານແດນພາຍໃນປະເທດ.

ໃຫ້ເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານພາຍໃນປະເທດ ຖືກລຶບລ້າງດ້ວຍການດຳເນີນການຢ່າງໃດຢ່າງໜຶ່ງຄື:

ກ. ໜ່ວຍງານພາສີຂອງປະເທດຜ່ານແດນໄດ້ຮັບຮອງການຜ່ານອອກໃນເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນໃນປະເທດໃນເວລາທີ່ສິນຄ້າຂ້າມແດນໄດ້ຜ່ານອອກໄປຈາກເຂດແດນ; ຫຼື

ຂ. ໜ່ວຍງານພາສີປະເທດປາຍທາງໄດ້ປະຕິບັດວິທີການກວດກາປ່ອຍສິນຄ້າເພື່ອໃຊ້ພາຍໃນປະເທດ ຫຼື ປະຕິບັດວິທີການແຈ້ງພາສີອື່ນສຳລັບສິນຄ້າໃນເວລາທີ່ສິນຄ້າໄດ້ມາເຖິງທີ່ໜ່ວຍງານປາຍທາງ.

## ມາດຕາ 07: ຂອບເຂດເວລາ.

ກ. ໃຫ້ເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນໃນປະເທດລະບຸໄລຍະເວລາທີ່ສາມາດໃຊ້ເອກະສານນັ້ນໄດ້ຢ່າງນ້ອຍ 6 ເດືອນນັບແຕ່ວັນທີອອກເອກະສານ ທັງນີ້ຫາກສຳນັກງານຂອງໜ່ວຍງານພາສີປະເທດຕົ້ນທາງໄດ້ມີການຮັບຮອງຄັ້ງທຳອິດແລ້ວກ່ອນໄລຍະເວລາມີຜົນນຳໃຊ້ລຶບລ້າງລົງ ກໍ່ໃຫ້ເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນໃນປະເທດຍັງຄົງມີຜົນໃຫ້ໃຊ້ໄດ້ຈົນເຖິງການດຳເນີນການຂົນສົ່ງສຳລັບເອກະສານທີ່ໄດ້ອອກໄວ້ນັ້ນສຳເລັດສົມບູນ.

ຂ. ການດຳເນີນການຂົນສົ່ງຂ້າມແດນພາຍໃຕ້ລະບຽບການຂອງເອກະສານຊ້ອນທ້າຍນີ້ຈະສຳເລັດສົມບູນໂດຍພາຫະນະ/ຕູ້ບັນທຸກສິນຄ້າ ໄດ້ຜ່ານອອກໄປຈາກເຂດແດນຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນ ພາຍໃນ 30 ວັນນັບແຕ່ມື້ທີ່ມີການຜ່ານເຂົ້າມາໃນເຂດແດນຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນ.

ຄ. ເພື່ອເຮັດໃຫ້ທັນຕາມກຳນົດເວລາເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນໃນປະເທດ ຈະຕ້ອງຖືກລຶບລ້າງລົງພາຍໃນໄລຍະເວລາບໍ່ເກີນ 3 ເດືອນນັບແຕ່ວັນທີຜ່ານເຂົ້າມາໃນເຂດແດນຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນ.

## ມາດຕາ 08: ເຫດການລະຫວ່າງທາງ.

ກ. ສິນຄ້າສູນຫາຍ, ເສຍຫາຍ ຫຼື ຈຳນວນຂາດຫາຍລະຫວ່າງທາງ.

1. ໃນກໍລະນີທີ່ສິນຄ້າສູນຫາຍ ຫຼື ເສຍຫາຍ ຫຼື ໝົບກວ່າ/ກາປະທັບພາສີຖືກທຳລາຍເສຍຫາຍ, ຜູ້ດຳເນີນການຂົນສົ່ງຈະຕ້ອງແຈ້ງໃຫ້ໜ່ວຍງານພາສີຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນຮັບຮູ້ທັນທີ.

2. ໃຫ້ສິນຄ້າທີ່ລະບຸໃນເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນໃນປະເທດ ຈະຕ້ອງໄດ້ຮັບການຍົກເວັ້ນຈາກການຊຳລະສະສາງພາສີ ແລະ ອາກອນ. ໃນກໍລະນີທີ່ພິສູດໃຫ້ໜ່ວຍງານພາສີເຂົ້າໃຈໄດ້ວ່າສິນຄ້າຖືກທຳລາຍ ຫຼື ສູນຫາຍຈົນບໍ່ອາດເອົາກັບຄືນໄດ້ດ້ວຍເຫດສຸດວິໄສລະຫວ່າງທາງ ຫຼື ການຂາດຫາຍໄປຕາມທຳມະຊາດເທົ່ານັ້ນ.

ຂ. ການປ່ຽນພາຫະນະ.

ໃນກໍລະນີທີ່ຜູ້ປະກອບການຂົນສົ່ງຈຳເປັນຕ້ອງປ່ຽນພາຫະນະຂົນສົ່ງລະຫວ່າງທາງ, ບຸກຄົນນັ້ນຈະ ຕ້ອງແຈ້ງໃຫ້ໜ່ວຍງານພາສີຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນຮັບຮູ້ໂດຍທັນທີ. ໜ່ວຍງານພາສີຈະຕ້ອງ ຄວບຄຸມການຂົນຍ້າຍສິນຄ້າ, ປ່ຽນການໜົບກວ່າ/ກາປະທັບແທນອັນທີ່ຖືກທຳລາຍ ແລະ ບັນທຶກຜົນການ ດຳເນີນການໃນເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນໃນປະ ເທດ. ພາຫະນະທີ່ນຳມາໃຊ້ແທນນັ້ນຈະຕ້ອງເປັນໄປຕາມມາດຕະຖານທາງເຕັກນິກທີ່ໄດ້ກຳນົດໄວ້ໃນມາດ ຕາ 03 ຂອງເອກະສານຊ້ອນທ້າຍນີ້.

ຄ. ການປ່ຽນແປງເສັ້ນທາງ.

ໃນກໍລະນີທີ່ຜູ້ດຳເນີນການຂົນສົ່ງຈຳເປັນຕ້ອງເລີກໃຊ້ເສັ້ນທາງທີ່ໄດ້ກຳນົດໄວ້ເນື່ອງຈາກສະຖານະການຢູ່ນອກເໜືອເຈດຕະນາຂອງຕົນ, ບຸກຄົນນັ້ນຈະຕ້ອງແຈ້ງໃຫ້ໜ່ວຍງານພາສີຂອງປະເທດທີ່ມີການຂົນ ສົ່ງເກີດຂຶ້ນຮັບຮູ້ໂດຍທັນທີ. ໜ່ວຍງານພາສີຈະຕ້ອງຕັ້ງໃຫ້ໜ່ວຍງານທີ່ກ່ຽວຂ້ອງອື່ນໆຮັບຮູ້ເພື່ອຈຸດປະສົງ ໃນການອະນຸຍາດເສັ້ນທາງອື່ນແທນ.

ງ. ການຂະຫຍາຍເວລາ.

ໃນກໍລະນີທີ່ຜູ້ດຳເນີນການບໍ່ສາມາດດຳເນີນການຂົນສົ່ງໃຫ້ສຳເລັດຕາມເວລາພາຍໃຕ້ລະບຽບການ ຂອງເອກະສານຊ້ອນທ້າຍນີ້ໃນເຂດແດນຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນ ຫຼື ບໍ່ສາມາດລຶບລ້າງເອກະ ສານຜ່ານແດນ

ພາສີໄດ້ທັນຕາມກຳນົດເວລາ ເນື່ອງຈາກເຫດສຸດວິໄສ ຫຼື ສາເຫດອື່ນທີ່ມີເຫດຜົນ, ບຸກຄົນ ນັ້ນຈະຕ້ອງຍື່ນຄວາມຕ້ອງການຂໍຂະຫຍາຍເວລາຕໍ່ໜ່ວຍງານພາສີຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນ ກ່ອນວັນໝົດອາຍຸ. ໜ່ວຍງານພາສີຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນອາດຈະຍອມໃຫ້ຂະຫຍາຍເວລາ ນັ້ນຫາກມີເຫດຜົນວ່າບໍ່ສາມາດດຳເນີນການຂົນສົ່ງໃຫ້ສຳເລັດສົມບູນຕາມເວລາ ຫຼື ບໍ່ສາມາດລົບລ້າງເອ ກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນໃນປະເທດໄດ້ເພາະເຫດ ສຸດວິໄສ ຫຼື ສາເຫດອື່ນທີ່ມີເຫດຜົນ.

## ມາດຕາ 09: ອົງການ/ສະຖາບັນທີ່ອອກເອກະສານ ແລະ ຄ້ຳປະກັນ.

ກ. ໃຫ້ແຕ່ລະລັດພາຄີ ມອບອຳນາດໃຫ້ອົງການ/ສະຖາບັນຂອງປະເທດທີ່ເປັນຜູ້ອອກເອກະສານ ຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນພາຍໃນປະເທດ ແລະ ໃຫ້ການຄ້ຳ ປະກັນຕໍ່ໜ່ວຍງານພາສີຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນສຳລັບການຊຳລະສະສາງອາກອນສົ່ງອອກ ແລະ ນຳເຂົ້າ ແລະ ຄ່າພາສີ (ລວມເຖິງດອກເບ້ຍ) ເມື່ອມີກໍລະນີທີ່ບໍ່ໄດ້ຮ່າງເອກະສານຢ່າງຖືກຕ້ອງ ຫຼື ຕາມກຳນົດເວລາ ຫຼື ກໍລະນີມີຄວາມຜິດປົກກະຕິອື່ນ.

ຂ. ລັດພາຄີ ຈະຍອມຮັບອົງການ/ສະຖາບັນທີ່ອອກເອກະສານ ແລະ ຄ້ຳປະກັນທີ່ໄດ້ຮັບມອບອຳ ນາດ.

ຄ. ເພື່ອຈຸດປະສົງສຳລັບການຊຳລະສະສາງຈຳນວນເງິນທີ່ໜ່ວຍງານພາສີຮຽກຮ້ອງ, ປະເທດທີ່ມີ ການຂົນສົ່ງເກີດຂຶ້ນຈະຕ້ອງກະກຽມສິ່ງອຳນວຍຄວາມສະດວກສຳລັບການໂອນເງິນຕາໃຫ້ກັບອົງການ/ສະ ຖາບັນທີ່ອອກເອກະສານ ແລະ ຄ້ຳປະກັນທີ່ໄດ້ຮັບມອບອຳນາດ.

## ມາດຕາ 10: ຄວາມຮັບຜິດຊອບຂອງອົງການ/ສະຖາບັນທີ່ອອກເອກະສານ ແລະ ຄ້ຳ ປະກັນ.

ກ. ອົງການ/ສະຖາບັນທີ່ອອກເອກະສານ ແລະ ຄ້ຳປະກັນທີ່ໄດ້ຮັບມອບອຳນາດຈະຕ້ອງຮັບຜິດ ຊອບຮ່ວມກັບຜູ້ດຳເນີນການຂົນສົ່ງໃນສ່ວນທີ່ຈະຕ້ອງຊຳລະສະສາງພາສີ-ອາກອນນຳເຂົ້າ-ສົ່ງອອກ ແລະ ດອກເບ້ຍພາຍໃຕ້ກົດໝາຍ ແລະ ລະບຽບພາສີໃນປະເທດທີ່ມີການຂົນສົ່ງເກີດຂຶ້ນທີ່ກ່ຽວກັບຄວາມຜິດປົກ ກະຕິ (ເຊັ່ນ: ການຝ່າຝືນກົດໝາຍ ແລະ ລະບຽບພາສີ, ການຂາດຄວາມຮັບຜິດຊອບ, ການລົບລ້າງເອກະ ສານທີ່ຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນໃນປະເທດບໍ່ທັນຕາມກຳນົດ ເວລາ) ສິ່ງທີ່ກ່ຽວຂ້ອງກັບການດຳເນີນການຂົນສົ່ງຂ້າມແດນພາຍໃຕ້ລະບຽບການຂອງເອກະສານຊ້ອນ ທ້າຍນີ້.

ຂ. ຄວາມຮັບຜິດຊອບຂອງອົງການ/ສະຖາບັນທີ່ອອກເອກະສານ ແລະ ຄ້ຳປະກັນທີ່ໄດ້ຮັບມອບ ອຳນາດຈະຕ້ອງບໍ່ພຽງແຕ່ຄວບຄຸມສິນຄ້າຕາມລາຍການໃນເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນພາຍໃນປະເທດເທົ່ານັ້ນ ແຕ່ຍັງລວມເຖິງສິນຄ້າອື່ນທີ່ບໍ່ໄດ້ຢູ່ໃນບັນຊີລາຍ ການກໍ່ຕາມ. ແຕ່ອາດບັນຈຸຢູ່ໃນຕູ້ບັນທຸກສິນຄ້າທີ່ມີການໜີບກົວ່/ກາປະທັບຂອງພາຫະນະທາງບົກ ຫຼື ອາດພົບເຫັນບໍລິເວນຕູ້ບັນທຸກສິນຄ້າ ຫຼື ຢູ່ທາມກາງສິນຄ້າທີ່ໄດ້ລະບຸໃນກໍລະນີຂອງສິນຄ້າທີ່ໜັກ ແລະ ມີ ຂະໜາດໃຫຍ່ຫຼາຍທີ່ບໍ່ມີການໜີບກົວ່/ກາປະທັບ.

ຄ. ພາຍໃຕ້ອຳນາດທີ່ມີຢູ່, ໜ່ວຍງານພາສີຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນອາດຮຽກຮ້ອງຄ່າ ພາສີ-ອາກອນ , ຄ່າປັບ ແລະ ດອກເບ້ຍຈາກຜູ້ດຳເນີນການຂົນສົ່ງທີ່ເປັນຜູ້ຮັບຜິດຊອບ ໂດຍກົງສຳລັບສິນ ຄ້ານັ້ນ.

ງ. ຫຼັງຈາກທີ່ໜ່ວຍງານພາສີຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນກວດພົບຄວາມຜິດປົກກະຕິ, ອົງ ການ/ສະຖາບັນທີ່ອອກເອກະສານ ແລະ ຄ້ຳປະກັນທີ່ໄດ້ຮັບມອບອຳນາດຈະຕ້ອງວາງປະກັນ ຫຼື ຊຳລະສະ ສາງຄ່າພາສີ-ອາກອນ ແລະ ດອກເບ້ຍໃຫ້ກັບໜ່ວຍງານພາສີຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນບໍ່ເກີນ 30 ວັນ ປະຕິທິນນັບແຕ່ວັນທີ່ໄດ້ມີການແຈ້ງ.

ຈ. ເມື່ອກວດບໍ່ພົບຄວາມຜິດປົກກະຕິ, ໜ່ວຍງານພາສີຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນຈະຕ້ອງ ຄືນພາສີ-ອາກອນຕາມຈຳນວນທີ່ໄດ້ຮຽກເກັບໄວ້ໂດຍບໍ່ຊັກຊ້າ ໃຫ້ແກ່ອົງການ/ສະຖາບັນທີ່ອອກເອກະສານ ແລະ ຄ້ຳປະກັນທີ່ໄດ້ຮັບມອບອຳນາດ. ທັງນີ້ອົງການ/ສະຖາບັນທີ່ອອກເອກະສານ ແລະ ຄ້ຳປະກັນທີ່ໄດ້ຮັບ ມອບ ອຳນາດຈະຕ້ອງຮຽກຮ້ອງການຂໍຄືນພາສີ-ອາກອນດັ່ງກ່າວພາຍໃນໄລຍະເວລາທີ່ໄດ້ກຳນົດໄວ້ໃນຫຼັກ ການ ແລະ ລະບຽບການຂອງປະເທດ.

ສ. ອົງການ/ສະຖາບັນທີ່ອອກເອກະສານ ແລະ ຄ້ຳປະກັນທີ່ໄດ້ຮັບມອບອຳນາດຂອງປະເທດທີ່ຈົດທະບຽນມີສິດທີ່ຈະຂໍການຊ່ວຍເຫຼືອ ແລະ ຮຽກຮ້ອງການຊຳລະເງິນຄືນຄ່າພາສີ-ອາກອນ ແລະ ດອກເບ້ຍທີ່ໄດ້ຊຳລະໄວ້ໃນຖານະຜູ້ຄ້ຳປະກັນຕໍ່ໜ່ວຍງານພາສີຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນຈາກຜູ້ດຳເນີນການຂົນສົ່ງທີ່ເປັນຜູ້ຮັບຜິດຊອບຕໍ່ຈຳນວນເງິນນັ້ນ.

ຊ. ໃຫ້ຄວາມຮັບຜິດຊອບຂອງອົງການ/ສະຖາບັນທີ່ອອກເອກະສານ ແລະ ຄ້ຳປະກັນທີ່ໄດ້ຮັບມອບອຳນາດກຳນົດຢູ່ຈຳນວນ 35,000 ໜ່ວຍສິດທິພິເສດໃນການຖອນເງິນ ຕໍ່ເອກະສານຜ່ານວິທີການແຈ້ງພາສີສຳລັບສິນຄ້າຂ້າມແດນ ແລະ ສິນຄ້າຜ່ານແດນພາຍໃນປະເທດທີ່ອອກ.

## ມາດຕາ 11: ການວາງຫຼັກຄ້ຳປະກັນຕໍ່ໜ່ວຍງານພາສີ.

ກ. ຫຼັກການທົ່ວໄປ.

ເພື່ອໃຫ້ເປັນໄປຕາມພັນທະໃນການຄ້ຳປະກັນຕໍ່ໜ່ວຍງານພາສີຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນ, ອົງການ/ສະຖາບັນທີ່ອອກເອກະສານ ແລະ ຄ້ຳປະກັນທີ່ໄດ້ຮັບມອບອຳນາດຈະຕ້ອງຈັດຫາຫຼັກຄ້ຳປະ ກັນໃຫ້ແກ່ໜ່ວຍງານພາສີຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນດ້ວຍຮູບແບບ ແລະ ມູນຄ່າເປັນເງິນທີ່ສະແດງໄວ້ໃນຂໍ້ (ຂ) ແລະ (ຄ) ດັ່ງຕໍ່ໄປນີ້:

ຂ. ຮູບແບບ.

ນອກເໜືອຈາກຮູບແບບອື່ນໆແລ້ວ, ອົງການ/ສະຖາບັນທີ່ອອກເອກະສານ ແລະ ຄໍ້າປະກັນທີ່ໄດ້ການມອບອຳນາດຈະຕ້ອງ:

1. ຮັກສາຊັບສິນໃນປະເທດທີ່ມີການຂົນສົ່ງເກີດຂຶ້ນ; ຫຼື
2. ວາງມັດຈຳເປັນເງິນສົດ; ຫຼື
3. ວາງມັດຈຳຈຳນວນໜຶ່ງ ແລະ ຕໍ່ເນື່ອງຕໍ່ໜ່ວຍງານພາສີຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນ:
   - ດ້ວຍການຈັດຫາໜັງສືທະນາຄານຄໍ້າປະກັນທີ່ອອກໃຫ້ໂດຍທະນາຄານ ຫຼື ສະຖາບັນການເງິນທີ່ກໍ່ຕັ້ງພາຍໃນປະເທດທີ່ມີການຂົນສົ່ງເກີດຂຶ້ນ; ຫຼື
   - ດ້ວຍການເຮັດສັນຍາປະກັນການຄໍ້າປະກັນກັບບໍລິສັດປະກັນໄພທີ່ກໍ່ຕັ້ງພາຍໃນປະເທດທີ່ການຂົນສົ່ງເກີດຂຶ້ນ.
4. ມີອົງການທີ່ມີຖານະເທົ່າທຽມກັນເຮັດໜ້າທີ່ເປັນຕົວແທນໃນປະເທດທີ່ມີການຂົນສົ່ງເກີດຂຶ້ນ; ຫຼື
5. ດຳເນີນການເປັນແບບປະສົມປະສານຈາກຮູບແບບຂ້າງເທິງທີ່ກ່າວມານັ້ນຕັ້ງແຕ່ 2 ແບບ ຫຼື ຫຼາຍກວ່າ. ທັງນີ້ຂຶ້ນກັບການຍອມຮັບຂອງໜ່ວຍງານພາສີຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນ.

ຄ. ມູນຄ່າເປັນເງິນ.

ມູນຄ່າສູງສຸດຂອງຫຼັກປະກັນທີ່ກະກຽມໄວ້ຕາມມາດຕານີ້ຄື 70,000 ໜ່ວຍສິດພິເສດໃນການຖອນເງິນ ຫາກມູນຄ່າຂອງຫຼັກປະກັນທີ່ກະກຽມໄວ້ໄດ້ຖືກໃຊ້ເປັນບາງສ່ວນ ຫຼື ທັງໝົດເນື່ອງຈາກຄວາມຮັບຜິດ ຊອບທີ່ເກີດຂຶ້ນຈະຕ້ອງຕື່ມໃຫ້ຄົບເປັນຈຳນວນ 70,000 ໜ່ວຍສິດທິພິເສດໃນການຖອນເງິນ.

## ມາດຕາ 12: ການປະຕິເສດຜູ້ກະທຳຄວາມຜິດ.

ກ. ລັດພາຄີ ມີສິດໃນການປະຕິເສດການໃຊ້ເອກະສານຊ້ອນທ້າຍນີ້ຢ່າງຊົ່ວຄາວ ຫຼື ຖາວອນສຳລັບບຸກຄົນ/ໜ່ວຍງານກ່ຽວຂ້ອງໃດໆທີ່ກະທຳຄວາມຜິດຮ້າຍແຮງລະເມີດຕໍ່ກົດໝາຍ ແລະ ລະບຽບທີ່ກ່ຽວຂ້ອງກັບພາສີໃນການດຳເນີນການຂົນສົ່ງສິນຄ້າລະຫວ່າງປະເທດ.

ຂ. ໃຫ້ໜ່ວຍງານພາສີຂອງລັດພາຄີ ທີ່ກ່ຽວຂ້ອງແຈ້ງການປະຕິເສດນີ້ໂດຍທັນທີກັບໜ່ວຍງານພາສີຂອງປະເທດລັດພາຄີອື່ນທັງໝົດ ແລະ ອົງການ/ສະຖາບັນທີ່ອອກເອກະສານ ແລະ ຄໍ້າປະກັນທີ່ໄດ້ຮັບມອບອຳນາດຂອງປະເທດທີ່ມີການຈົດທະບຽນ.

## ມາດຕາ 13: ການດັດແກ້.

ລັດພາຄີໃດໜຶ່ງ ສາມາດສະເໜີໃຫ້ມີການດັດແກ້ເອກະສານຊ້ອນທ້າຍໄດ້ ໂດຍຜ່ານຄະນະກໍາມະ ການຮ່ວມ, ການດັດແກ້ດັ່ງກ່າວຈະຕ້ອງຜ່ານການເຫັນດີເປັນເອກະພາບຈາກທຸກລັດພາຄີ.

## ມາດຕາ 14: ການໃຫ້ສັດຕະຍາບັນ ຫຼື ການຍອມຮັບ.

ເອກະສານຊ້ອນທ້າຍ ຈະຕ້ອງໄດ້ຮັບການໃຫ້ສັດຕະຍາບັນ ຫຼື ຍອມຮັບຈາກລັດຖະບານຂອງລັດ ພາຄີ. ມາດຕານີ້ແມ່ນຍັງໃຊ້ກັບກໍລະນີທີ່ມີການດັດແກ້ເອກະສານຊ້ອນທ້າຍເພີ່ມເຕີມເຊັ່ນດຽວກັນ (ຖ້າມີ).

## ມາດຕາ 15: ຜົນບັງຄັບໃຊ້.

ເອກະສານຊ້ອນທ້າຍ ຈະມີຜົນບັງຄັບໃຊ້ນັບແຕ່ວັນທີ ທີ່ລັດພາຄີຢ່າງນ້ອຍ 2 ປະເທດ ໄດ້ໃຫ້ສັດ ຕະຍາບັນ ຫຼື ຍອມຮັບ ແລະ ຈະມີຜົນກັບສະເພາະປະເທດທີ່ໃຫ້ສັດຕະຍາບັນແລ້ວເທົ່ານັ້ນ. ມາດຕານີ້ແມ່ນ ຍັງໃຊ້ກັບກໍລະນີທີ່ມີການດັດແກ້ເອກະສານຊ້ອນທ້າຍເພີ່ມເຕີມເຊັ່ນດຽວກັນ (ຖ້າມີ).

## ມາດຕາ 16: ການປັບປຸງກົດໝາຍພາຍໃນປະເທດ.

ໃນກໍລະນີທີ່ຈໍາເປັນ, ລັດພາຄີ ຕ້ອງໄດ້ດໍາເນີນການປັບປຸງກົດໝາຍພາຍໃນປະເທດທີ່ກ່ຽວຂ້ອງໃຫ້ສອດຄ່ອງ ກັບເນື້ອໃນເອກະສານຊ້ອນທ້າຍ.

## ມາດຕາ 17: ຂໍ້ສະຫງວນ.

ບໍ່ອະນຸຍາດໃຫ້ມີການຕັ້ງຂໍ້ສະຫງວນຕໍ່ເອກະສານຊ້ອນທ້າຍນີ້.

## ມາດຕາ 18: ການຢຸດຕິການນໍາໃຊ້ເອກະສານຊ້ອນທ້າຍ.

ກ. ຫາກອົງການ/ສະຖາບັນທີ່ອອກເອກະສານ ແລະ ຄໍ້າປະກັນທີ່ໄດ້ຮັບມອບອໍານາດຂອງປະເທດທີ່ມີການ ຈົດທະບຽນບໍ່ວາງມັດຈໍາ ຫຼື ຊໍາລະສະສາງຄ່າພາສີ-ອາກອນ ແລະ ດອກເບ້ຍ ພາຍໃນກໍານົດເວລາຕາມທີ່ໄດ້ລະບຸໄວ້ໃນ ມາດຕາ 10 (ຄ) ຂອງເອກະສານຊ້ອນທ້າຍນີ້ແກ່ໜ່ວຍງານພາສີຂອງປະເທດທີ່ມີການຂົນສົ່ງເກີດຂຶ້ນເມື່ອມີກໍລະນີທີ່ ໄດ້ພິສູດພົບຄວາມຜິດປົກກະຕິແລ້ວ, ໃຫ້ໜ່ວຍງານພາສີໃນປະເທດທີ່ມີການຂົນສົ່ງເກີດຂຶ້ນມີສິດຢຸດຕິການນໍາໃຊ້ການ ໃຫ້ບໍລິການວິທີການແຈ້ງພາສີສໍາລັບສິນຄ້າຂ້າມແດນ ແລະ ສິນ ຄ້າຜ່ານແດນໃນປະເທດພາຍໃຕ້ລະບຽບການຕາມ ເອກະສານຊ້ອນທ້າຍນີ້ຕໍ່ຜູ້ດໍາເນີນການຂົນສົ່ງ ຊຶ່ງອົງ ການ/ສະຖາບັນທີ່ອອກເອກະສານ ແລະ ຄໍ້າປະກັນຂອງປະເທດທີ່ ມີການຈົດທະບຽນນັ້ນຜິດສັນຍາ.

໒. ລັດພາຄີແຕ່ລະປະເທດ ອາດຈະຢຸດຕິການນຳໃຊ້ເອກະສານຊ້ອນທ້າຍຊົ່ວຄາວ ທັງໝົດ ຫຼື ບາງສ່ວນໂດຍທັນທີເມື່ອມີກໍລະນີສຸກເສີນທີ່ມີຜົນກະທົບຕໍ່ຄວາມປອດໄພພາຍໃນປະເທດ. ລັດພາຄີ ຈະຕ້ອງ ແຈ້ງຕໍ່ລັດພາຄີອື່ນຮັບຮູ້ໂດຍໄວທີ່ສຸດກ່ຽວກັບການຢຸດຕິການນຳໃຊ້ເອກະສານຊ້ອນທ້າຍ ແລະ ຈະສິ້ນສຸດ ລົງທັນທີທີ່ເຫດການກັບສູ່ສະພາວະປົກກະຕິ.

## ມາດຕາ 19: ການພົວພັນກັບສັນຍາ.

ໃນຖານະທີ່ເປັນມາດຕະການໃນການດຳເນີນການຕາມຫຼັກການທີ່ກຳນົດໄວ້ໃນສັນຍາ, ເອກະສານ ຊ້ອນທ້າຍຈະຕ້ອງບໍ່ມີການບິດເບືອນ ຫຼື ຂັດຕໍ່ຫຼັກການດັ່ງກ່າວ. ໃນກໍລະນີທີ່ມີຂໍ້ຂັດແຍ່ງ ລະຫວ່າງ ເອກະ ສານຊ້ອນທ້າຍ ແລະ ສັນຍາ ແມ່ນໃຫ້ຖືເອົາສັນຍາເປັນຫຼັກ ແລະ ໃນກໍລະນີທີ່ມີຂໍ້ຂັດແຍ່ງ ລະຫວ່າງ ເອກະ ສານຊ້ອນທ້າຍນີ້ກັບເອກະສານຊ້ອນທ້າຍອື່ນ ຫຼື ອະນຸສັນຍາ ໃຫ້ຕີຄວາມໝາຍໂດຍອາໄສສັນຍາເປັນຫຼັກ.

## ມາດຕາ 20: ການພົວພັນຂອງເອກະສານຄັດຕິດກັບເອກະສານຊ້ອນທ້າຍ.

ເອກະສານຄັດຕິດ ຖືເປັນສ່ວນໜຶ່ງຂອງເອກະສານຊ້ອນທ້າຍ ແລະ ມີຜົນສັດສິດເທົ່າທຽມກັນ.

## ມາດຕາ 21: ການແກ້ໄຂຂໍ້ຂັດແຍ່ງ.

ທຸກຂໍ້ຂັດແຍ່ງທີ່ເກີດຂຶ້ນກ່ຽວກັບການຕີຄວາມໝາຍ ຫຼື ການນຳໃຊ້ເອກະສານຊ້ອນທ້າຍສະບັບນີ້ ລະຫວ່າງ ລັດພາຄີ ນັບແຕ່ 2 ປະເທດ ຫຼື ຫຼາຍກວ່ານັ້ນ ຈະຖືກແກ້ໄຂໂດຍກົງ ຫຼື ໂດຍຜ່ານການເຈລະຈາຢ່າງສັນຕິວິທີໃນຄະນະກຳມະການຮ່ວມກັນ.

## ມາດຕາ 22: ການຍົກເລີກ.

ເມື່ອເອກະສານຊ້ອນທ້າຍມີຜົນບັງຄັບໃຊ້ແລ້ວ, ເອກະສານຊ້ອນທ້າຍບໍ່ສາມາດຖືກຍົກເລີກແຍກ ຕ່າງຫາກຈາກສັນຍາໄດ້.

**ເອກະສານຄັດຕິດ 1 ກ**: ມາດຕະຖານທາງເຕັກນິກຂອງພາຫະນະຕາມຈຸດປະສົງຂອງລະບຽບການຂ້າມແດນຂອງພາສີ.

**ເອກະສານຄັດຕິດ 1 ຂ:** ໜັງສືຮັບຮອງການກວດກາສະພາບພາຫະນະຕາມຈຸດປະສົງຂອງລະບຽບ ການຂ້າມແດນຂອງພາສີ.

**ເອກະສານຄັດຕິດ 2 ກ:** ມາດຕະຖານທາງເຕັກນິກຂອງຕູ້ບັນທຸກສິນຄ້າຕາມຈຸດປະສົງຂອງລະບຽບ ການຂ້າມແດນຂອງພາສີ.

**ເອກະສານຄັດຕິດ 2 ຂ:** ໜັງສືຮັບຮອງສະພາບຕູ້ບັນທຸກສິນຄ້າຕາມຈຸດປະສົງຂອງລະບຽບການຂ້າມແດນຂອງພາສີ.

ເພື່ອເປັນພະຍານຕໍ່ເອກະສານນີ້, ຜູ້ລົງນາມຂ້າງລຸ່ມນີ້ ແມ່ນໄດ້ຮັບມອບສິດຢ່າງຖືກຕ້ອງໃນການລົງ ນາມໃນເອກະສານຊ້ອນທ້າຍນີ້.

ລົງນາມທີ່ ປັກກິ່ງ, ວັນທີ 20 ມີນາ 2007 ໂດຍເປັນພາສາອັງກິດ ຊຶ່ງມີຕົ້ນສະບັບຈານວນ 06 ສະ ບັບ.

ລົງນາມ ໂດຍ:

ລັດຖະບານແຫ່ງລາຊະອານາຈັກ ກຳປູເຈຍ

ພະນະທ່ານ Tram Iv Tek
ລັດຖະມົນຕີຊ່ວຍວ່າການກະຊວງໂຍທາທິການແລະ ຂົນສົ່ງ

ລັດຖະບານແຫ່ງສາທາລະນະລັດ ປະຊາຊົນ ຈີນ

ພະນະທ່ານ Weng Mengyong
ລັດຖະມົນຕີຊ່ວຍວ່າການກະຊວງການສື່ສານ

ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ພະນະທ່ານ ສົມມາດ ພົນເສນາ
ລັດຖະມົນຕີວ່າການກະຊວງຄົມມະນາຄົມ, ຂົນສົ່ງ, ໄປະສະນີ ແລະ ກໍ່ສ້າງ

ລັດຖະບານແຫ່ງສະຫະພາບ ມຽນມາ

ພະນະທ່ານ Thura Thaung Lwin
ລັດຖະມົນຕີຊ່ວຍວ່າການກະຊວງຂົນສົ່ງທາງລົດໄຟ

ລັດຖະບານແຫ່ງລາຊະອານາຈັກ ໄທ

ພະນະທ່ານ Sansern Wongcha-um
ລັດຖະມົນຕີຊ່ວຍວ່າການກະຊວງຄົມມະນາຄົມ

ລັດຖະບານແຫ່ງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

ພະນະທ່ານ Tran Doan Tho
ລັດຖະມົນຕີຊ່ວຍວ່າການກະຊວງຄົມມະນາຄົມ

**ເອກະສານຄັດຕິດ 1 ກ:** ມາດຕະຖານທາງເຕັກນິກຂອງພາຫະນະຕາມຈຸດປະສົງຂອງລະບຽບການຂ້າມແດນຂອງພາສີ.

**ເອກະສານຄັດຕິດ 1 ຂ:** ໜັງສືຮັບຮອງການກວດກາສະພາບພາຫະນະຕາມຈຸດປະສົງຂອງລະບຽບ ການຂ້າມແດນຂອງພາສີ.

**ເອກະສານຄັດຕິດ 2 ກ:** ມາດຕະຖານທາງເຕັກນິກຂອງຕູ້ບັນທຸກສິນຄ້າຕາມຈຸດປະສົງຂອງລະບຽບ ການຂ້າມແດນຂອງພາສີ.

**ເອກະສານຄັດຕິດ 2 ຂ:** ໜັງສືຮັບຮອງສະພາບຕູ້ບັນທຸກສິນຄ້າຕາມຈຸດປະສົງຂອງລະບຽບການຂ້າມແດນຂອງພາສີ.

ເອກະສານຄັດຕິດນີ້ ສາມາດຊອກໄດ້ຈາກສັນຍາຂອງທະນາຄານພັດທະນາອາຊີ ວ່າດ້ວຍການອຳ ນວຍຄວາມສະດວກໃນການຂົນສົ່ງຜ່ານແດນໃນຂອບອະນຸພາກພື້ນລຸ່ມແມ່ນ້ຳຂອງທີ່ເວັບໄຊ: www.adb.org/GMS/Cross-Border/default.asp.  ໃນນີ້, ເອກະສານນີ້ ແມ່ນບໍ່ໄດ້ຖືກນຳມາປະກອບໃນນີ້ ເພາະດ້ານເນື້ອໃນ ແລະ/ຫຼື ເຕັກນິກ ແມ່ນມີຄວາມສັບສົນ.